# ບົດກ່າວເປີດຂອງລັດຖະມົນຕີ
# ກະຊວງ ກະສິກຳ ແລະ ປ່າໄມ້
# ຕໍ່ກອງປະຊຸມ

**ກອງປະຊຸມປຶກສາຫາລື ແລະ ແລກປ່ຽນບົດຮຽນກ່ຽວກັບການພັດທະນາກະສິກຳອິນຊີລາວຄັ້ງທີ7 ພາຍໃຕ້ຫົວຂໍ້"ການພັດທະນາແບບສີຂຽວ: ຍຸດທະສາດແຫ່ງຊາດ ແລະ ຄວາມສາມາດການແຂ່ງຂັນໃນລະດັບສາກົນ" ທີ່ໂຮງແຮມຄຣາວພາຊາ ໃນວັນທີ 28-29/11/2019.**

**ຮຽນ:**

- ບັນດາທ່ານແຂກຜູ້ມີກຽດ, ລັດຖະມົນຕີ, ຮອງລັດຖະມົນຕີ, ຫົວໜ້າກົມ, ຮອງກົມຈາກບັນດາກະຊວງແລະຂະແໜງການຕ່າງໆ
- ຜູ້ຜະລິດແລະຜູ້ປະກອບການ, ບັນດາບໍລິສັດຕ່າງໆ
- ແຂກທີ່ມີກຽດມາຈາກພາຍໃນແລະຕ່າງປະເທດ

ຂ້າພະເຈົ້າຮູ້ສຶກ ເປັນກຽດ, ທີ່ໄດ້ເຂົ້າຮ່ວມເປັນປະທານກອງປະຊຸມປຶກສາຫາລືການຜະລິດກະສິກຳອິນຊີຢູ່ສປປລາວ.

ໂດຍປະຕິບັດຕາມທິດນະໂຍບາຍກະສິກຳສະອາດຂອງພັກ-ລັດ, ກະຊວງກະສິກຳແລະປ່າໄມ້ໄດ້ໃຫ້ຄວາມສຳຄັນແລະສະໜັບສະໜູນການຜະລິດກະສິກຳອິນຊີ, ຊຶ່ງແມ່ນໜຶ່ງໃນເປົ້າໝາຍ ຂອງກະສິກຳສະອາດ.ສປປລາວເຮົາຖືວ່າມີຂໍ້ໄດ້ປຽບຫຼາຍດ້ານໃນການຜະລິດກະສິກຳສະອາດ ເນື່ອງຈາກວ່າ ພວກເຮົາມີທ່າແຮງທາງດ້ານ ທຳມະຊາດ ເປັນຕົ້ນແມ່ນ ດິນ, ນ້ຳ ແລະ ສະພາບແວດລ້ອມ ທີ່ຍັງສະອາດ ແລະ ບໍລິສຸດ, ແຕ່ສິ່ງທ້າທ້າຍຂອງພວກເຮົາກໍ່ຄື ເຮັດແນວໃດພວກເຮົາຈະຮັກສາສິ່ງທີ່ພວກເຮົາມີຢູ່ນີ້ໃຫ້ມີຄວາມໝັ້ນຄົງ ແລະ ຍືນຍົງ. ໃນເວລາດຽວກັນພື້ນຖານວັດຖຸ-ເຕັກນິກການຜະລິດຂອງປະເທດພັດຍັງອ່ອນນ້ອຍ, ການຜະລິດກະສິກຳຂະໜາດນ້ອຍແລະ ກະແຈກກະຈາຍ, ບໍ່ສາມາດແຂ່ງຂັນດ້ານປະລິມານ ແລະ ຄຸນນະພາບ ເຮັດໃຫ້ການຜະລິດເປັນສິນຄ້າ ຂອງລາວປະເຊີນໜ້າກັບອຸປະສັກ ແລະ ສິ່ງທ້າທາຍຫຼາຍຢ່າງ.

ຕໍ່ໜ້າສິ່ງທ້າທາຍຫຼາຍຢ່າງ ທີ່ກ່າວມາຂ້າງເທິງນັ້ນ, ມັນຮຽກຮ້ອງໃຫ້ ສປປລາວ ຕ້ອງໄດ້ສຸມໃສ່ ການປັບປຸງໂຄງປະກອບ ການຜະລິດຫຼາຍຢ່າງ ເປັນຕົ້ນແມ່ນ ໂຄງລ່າງພື້ນຖານ, ລະບຽບການຄຸ້ມຄອງມາດຕະຖານການຜະລິດ ໄປຄຽງຄູ່ກັບ ການສ້າງບຸກຄະລາກອນ ເພື່ອມາປັບປຸງຄຸນ

ນະພາບການຜະລິດ ທີ່ສາມາດແຂ່ງຂັນທາງດ້ານປະລິມານ ແລະ ຄຸນນະພາບ, ມີຄວາມປອດໄພ ແລະ ສິ່ງສຳຄັນ ແມ່ນ ລາຄາ ທີ່ສາມາດແຂ່ງຂັນໄດ້.

*ບັນດາທ່ານບັນດາສະຫາຍທີ່ຮັກແພງ,*

ໃນສະພາບປະຈຸບັນ, ຜູ້ບໍລິໂພກ ຢູ່ພາຍໃນແລະຕ່າງປະເທດ ໄດ້ມີຄວາມຮຽກຮ້ອງຕ້ອງການຜົນຜະລິດ ທີ່ມີຄຸນນະພາບ, ຄວາມປອດໄພ ແລະ ການຜະລິດທີ່ເປັນມິດກັບສິ່ງແວດລ້ອມ ນັບມື້ນັບສູງຂຶ້ນ.

ດັ່ງນັ້ນ, ມັນມີຄວາມຈຳເປັນສຳລັບປະເທດເຮົາຕ້ອງໄດ້ຫັນປ່ຽນ ທັດສະນະ ການຜະລິດກະສິກຳ ໃຫ້ຕອບສະໜອງ ກັບ ຄວາມຕ້ອງການ ຂອງຜູ້ບໍລິໂພກ ກໍ່ຄືຕະຫຼາດ, ໂດຍສະເພາະ ແມ່ນການຫັນ ຮູບແບບການຜະລິດ ເຂົ້າສູ່ລະບົບມາດຕະຖານເພື່ອຮອງຮັບກັບທ່າອ່ຽງຂອງສັງຄົມແລະສາມາດເສື່ອມໂຍງເຂົ້າກັບສາກົນແລະພາກພື້ນ.

ຄືບັນດາທ່ານ ໄດ້ຮັບຮູ້ ແລະ ຜ່ານປະສົບການຜ່ານ, ເກືອບ 1 ສັດຕະວັດ, ທີ່ມີການວິວັດທະນາ ການຜະລິດກະສິກຳຢ່າງເຖິງຂັ້ນສູງສຸດ ຊຶ່ງພວກເຮົາເອີ້ນກັນໃນເວລານັ້ນ ວ່າ ການປະຕິວັດຂຽວ, ໂດຍສະເພາະ ແມ່ນຜົນສຳເລັດຂອງ ອຸດສະຫະກຳເຄມີ ມີການຜະລິດປຸ໋ຍເຄມີ ແລະ ຢາປາບສັດຕູພືດ ພ້ອມດ້ວຍແນວພັນ ທີ່ໃຫ້ສະມັດຕະພາບສູງ ແລະ ທົນທານຕໍ່ພະຍາດ (ແນວພັນຕັດແຕ່ງພັນທຸກັດ-GMO), ຜົນສຳເລັດ ດັ່ງກ່າວ ເຮັດໃຫ້ສະພາບການຜະລິດສະບຽງອາຫານຂອງໂລກ, ຫຼາຍປະເທດໄດ້ມີສະບຽງອາຫານ ພຽງພໍກັບຄວາມຕ້ອງການຂອງປະຊາກອນຕົນ, ເສດຖະກິດດີຂຶ້ນ, ທຸກຄົນ ຢູ່ໃນສະພາບ ກິນອີ່ມນຸ່ງອຸ່ນ, ແຕ່ວ່າ ໃນຄະນະດຽວກັນ ລະບົບການຜະລິດແບບເກົ່າ ໄດ້ສ້າງຜົນກະທົບດ້ານລົບຫຼາຍຢ່າງ ເປັນຕົ້ນແມ່ນ ຜົນກະທົບດ້ານສານເຄມີຕົກຄ້າງ ໃນຜົນຜະລິດ, ໃນສະພາບແວດລ້ອມ ແລະ ອາກາດ, ເຮັດໃຫ້ ມີຜົນກະທົບຕໍ່ສຸຂະພາບຄົນ ສັດ ແລະ ສິ່ງແວດລ້ອມ, ສະພາບການປ່ຽນແປງດິນຟ້າກາດ.

ຕໍ່ກັບສະພາບການດັ່ງກ່າວນັ້ນ, ຜູ້ບໍລິໂພກທັງຫຼາຍ ລວມທັງ ບັນດາທ່ານ ທຸກຄົນໃນທີ່ນີ້, ໄດ້ຫັນມາໃຫ້ຄວາມສົນໃຈ ຕໍ່ສຸຂະພາບຫຼາຍຂຶ້ນ, ປ່ຽນທັດສະນະ ຄະຕິຂອງຕົນເອງ, ຈາກກິນອີ່ມນຸ່ງອຸ່ນ ມາເປັນ ກິນແຊບນຸ່ງງາມ, ຍິ່ງໄປກວ່ານັ້ນ ກໍ່ຍັງຮຽກຮ້ອງໄປເຖິງ ຜົນຜະລິດ ທີ່ຜະລິດມາຈາກ ລະບົບການຜະລິດທີ່ເປັນມິດກັບສິ່ງແວດລ້ອມ. ຊຶ່ງການຜະລິດກະສິກຳອິນຊີ, ທີ່ພວກເຮົາມາປະຊຸມກັນ ມື້ນີ້ກໍ່ແມ່ນ ໜຶ່ງໃນລະບົບການຜະລິດ ທີ່ບໍ່ມີການນຳໃຊ້ສານເຄມີ ແລະ ຜູກພັນກັບການອະນຸລັກສິ່ງແວດລ້ອມຫຼາຍທີ່ສຸດ.

*ບັນດາແຂກທີ່ຮັກແພງແລະນັບຖື,*

ໂດຍອີງໃສ່ທ່າແຮງຂອງປະເທດແລະທ່າອ່ຽງຂອງໂລກ, ພັກ-ລັດຖະບານຂອງພວກເຮົາຈຶ່ງຖືເອົາການຜະລິດກະສິກຳສະອາດ, ຊຶ່ງກະສິກຳອິນຊີກໍ່ແມ່ນໜຶ່ງໃນຍຸດທະສາດການພັດທະນາກະສິກຳສະອາດ ໃຫ້ກາຍເປັນສິນຄ້າກະສິກຳຍຸດທະສາດຂອງລາວໃນການເຂົ້າສູ່ຕະຫລາດພາຍໃນແລະສາກົນ.

ໃນໄລຍະຜ່ານມາ,ກະຊວງກະສິກຳແລະປ່າໄມ້ໄດ້ຜັນຂະຫຍາຍນະໂຍບາຍກະສິກຳສະອາດລົງສູ່ພາກປະຕິບັດຕົວຈິງໂດຍການຍາດແຍ່ງການສະໜັບສະໜູນທັງພາຍໃນແລະຕ່າງປະເທດມາສະໜັບສະໜູນ ການຜະລິດກະສິກຳສະອາດ, ເຮັດໃຫ້ມີການຈັດຕັ້ງປະຕິບັດກະສິກຳສະອາດໂດຍສະເພາະການຜະລິດກະສິກຳອິນຊີ, ຊຶ່ງໄດ້ມີການຈັດຕັ້ງປະຕິບັດຢູ່ບັນດາເມືອງແລະແຂວງຕ່າງໆ ໃນຂອບເຂດທົ່ວປະເທດ.ກະຊວງກະສິກຳແລະປ່າໄມ້ກໍ່ໄດ້ສ້າງຍຸດທະສາດ ການພັດທະນາກະສິກຳສະອາດ, ສ້າງບັນດາ ນິຕິກຳ ເພື່ອຮອງຮັບ ການຜະລິດ ໃຫ້ສອດຄ່ອງກັບ ສະພາບຄວາມຕ້ອງການ ຂອງຜູ້ ບໍລິໂພກ, ເປັນຕົ້ນແມ່ນມາດຕະຖານກະສິກຳອິນຊີແລະມາດຕະຖານກະສິກຳທີ່ດີ.

ເຖິງຢ່າງໃດກໍ່ດີ, ໄລຍະຜ່ານມາພວກເຮົາໄດ້ມີການລິເລີ່ມການສົ່ງເສີມການຜະລິດກະສິກຳສະອາດໃນຫຼາຍດ້ານເປັນຕົ້ນແມ່ນດ້ານນິຕິກຳແລະເຕັກນິກຕ່າງໆລົງສູ່ປະຊາຊົນ, ແຕ່ການພັດທະນາແລະການສົ່ງເສີມນັ້ນແມ່ນຍັງຢູ່ໃນຂອບເຂດຈຳກັດບໍ່ຂະຫຍາຍລົງສູ່ລົງກວ້າງ. ເນື່ອງຈາກວ່າພວກເຮົາຍັງບໍ່ທັນມີແຜນການເປົ້າໝາຍສູ້ຊົນລະອຽດວ່າຈະຜະລິດກະສິກຳສະອາດຕາມມາດຕະຖານໃດມາດຕະຖານອິນຊີຫຼືມາດຕະຖານກະສິກຳທີ່ດີໃຫ້ໄດ້ຫຼາຍປານໃດ, ຢູ່ເຂດໃດ, ເມືອງໃດ, ແຂວງໃດ. ພວກເຮົາຕ້ອງຍອມຮັບວ່າການຜະລິດກະສິກຳນັ້ນບໍ່ແມ່ນພາກລັດຈະໄປເຮັດໂດຍກົງ, ແຕ່ຜູ້ທີ່ຂັບເຄື່ອນການຜະລິດກະສິກຳທີ່ສຳຄັນແມ່ນຊາວກະສິກອນ, ຜູ້ຜະລິດແລະຜູ້ປະກອບການ, ແຕ່ພາກລັດຈະເປັນຜູ້ອຳນວຍຄວາມສະດວກໃຫ້ຄຳປຶກສາດ້ານເຕັກນິກແລະຄຸ້ມຄອງດ້ານລະບຽບການ.

ດັ່ງນັ້ນ, ກອງປະຊຸມໃນມື້ນີ້ຈຶ່ງເປັນການລວມຕົວກັນຄັ້ງສຳຄັນໃນການເຕົ້າໂຮມກ້ອນກຳລັງອັນມະຫາສານຂອງຂະແໜງການຜະລິດກະສິກຳອິນຊີ.ຂ້າພະເຈົ້າເຊື່ອໝັ້ນວ່າກອງປະຊຸມໃນຄັ້ງນີ້ຖືວ່າເປັນກອງປະຊຸມປຶກສາຫາລືກັນເພື່ອຊອກຫາຊ່ອງທາງແລະວິທີການທີ່ດີໃນການນຳເອົາທິດທາງນະໂຍບາຍຂອງພັກ-ລັດລົງມາຈັດຕັ້ງປະຕິບັດໃຫ້ເປັນຮູບປະທຳ.

**ສຸດທ້າຍນີ້, ຂ້າພະເຈົ້າ, ໃນນາມການນຳຂອງກະຊວງກະສິກຳແລະປ່າໄມ້ຂໍສະແດງຄວາມຂອບໃຈບັນດາທ່ານແຂກທີ່ມີກຽດຜູ້ເຂົ້າຮ່ວມກອງປະຊຸມໝົດທຸກທ່ານພ້ອມທັງອວຍພອນໃຫ້ທ່ານຈົ່ງມີສຸຂະພາບເຂັ້ມແຂງສືບຕໍ່ນຳເອົາບົດຮຽນແລະວິທີການທີ່ໄດ້ຮັບຜົນສຳເລັດແລ້ວໄປຜັນຂະຫຍາຍໃຫ້ມີຜົນສຳເລັດໃນຂັ້ນຕໍ່ໄປແລະຂໍເປີດກອງປະຊຸມຢ່າງເປັນທາງການ.**

**ຂໍຂອບໃຈ**